ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການແຂວງ

ເລກທີ.244/ຫວຂ. ອປ

ອັດຕະປື, ລົງວັນທີ.13...3...2020

# ແຈ້ງການ

ເຖິງ: - ທ່ານ ຫົວໜ້າກອງບັນຊາການ ປກສ ແຂວງ

- ທ່ານ ຫົວໜ້າກອງບັນຊາການທະຫານແຂວງ
- ທ່ານ ເຈົ້າເມືອງ 5 ເມືອງ.
- ທ່ານ ຫົວໜ້າຄະນະຄຸ້ມຄອງດ່ານສາກົນພູເກືອ.
- ທ່ານ ຫົວໜ້າພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າຂັ້ນແຂວງ

ເລື່ອງ: ແຈ້ງປິດດ່ານທ້ອງຖິ່ນ ແລະ ດ່ານປະເພນີເຂົ້າ-ອອກຊົ່ວຄາວ ລະຫວ່າງແຂວງອັດຕະປື-ແຂວງກອນຕູມ ສ ສ ຫວຽດນາມ ແລະ ອັດຕະປື - ແຂວງຣຽງແຕງ ແລະ ລັດຕະນະຄີລີ ຣາຊະອານາຈັກ ກໍາປູເຈຍ.

- ອີງຕາມ ຄໍາສັ່ງ ຂອງເຈົ້າແຂວງ ສະບັບເລກທີ 05 / ຈຂກອປ ລົງວັນທີ 12 / 3 / 2020 ກ່ຽວກັບການປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ພະຍາດອັກເສບປອດຈາກເຊື້ອຈຸລະໂລກພັນໃໝ່ ( COVID - 19).
- ອີງຕາມ ໜັງສືສະເໜີ ຂອງພະແນກສາທາລະນະສຸກແຂວງ ສະບັບເລກທີ 84 / ສທຂ ລົງວັນທີ 13 / 3 / 2020.

ຫ້ອງວ່າການແຂວງອັດຕະປື ຂໍຖືເປັນກຽດແຈ້ງທິດຊີ້ນໍາຂອງຂັ້ນເທິງເພື່ອຈັດຕັ້ງປະຕິບັດການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່COVIT-19 ລາຍລະອຽດດັ່ງລຸ່ມນີ້:

1. ໃຫ້ປິດດ່ານທ້ອງຖິ່ນ ແລະ ດ່ານປະເພນີທີ່ຕິດຈອດກັບເຂດຊາຍແດນແຂວງອັດຕະປື-ແຂວງກອນຕູມ ສ ສ ຫວຽດນາມ ແລະ ແຂວງອັດຕະປື - ແຂວງລັດຕະນະຄີລີ ແລະ ຣຽງແຕງ ຣາຊະອານາຈັກກໍາປູເຈຍ ນັບແຕ່ມື້ອອກແຈ້ງການ ຈົນກວ່າສະພາບການລະບາດຂອງພະຍາດສາມາດຄວບຄຸມໄດ້ດີ:

- ດ່ານພູຍາງ, ເມືອງພູວົງ ແຂວງອັດຕະປື.
- ດ່ານຟ 1 ເຂດວັງຕັດ ເມືອງຊານໄຊ ແຂວງອັດຕະປື.
- ດ່ານເຊປຽນ ເມືອງສະໜາມໄຊ ແຂວງອັດຕະປື.
- ດ່ານປະເພນີ( ຟ2, ຟ3, ຟ4, ຟ5 ແລະ ຟ6 )

ຖ້າມີຄວາມຈໍາເປັນໃນການເຂົ້າ-ອອກຂອງປະຊາຊົນ, ນິຕິບຸກຄົນທີ່ດໍາລົງຊີວິດສອງຟາກຊາຍແດນ ແມ່ນໃຫ້ມາຜ່ານດ່ານສາກົນພູເກືອ-ເບີອີ( ສໍາລັບ ສ ສ ຫວຽດນາມ ) ແລະ ດ່ານສາກົນໜອງນົກຂຽນ( ສໍາລັບຣາຊະອານາຈັກກໍາປູເຈຍ ).

2. ມອບໃຫ້ກອງບັນຊາການ ປກສ ແຂວງ ແລະ ກອງປະຊາການທະຫານແຂວງ ຊີ້ນໍາບັນດາກອງຮ້ອຍຊາຍແດນ ແລະ ເຈົ້າໜ້າທີ່ຜູ້ຮັບຜິດຊອບໃນແຕ່ລະດ່ານ - ແຕ່ລະຈຸດ ສຶກສາອົບຮົມພໍ່ແມ່ປະຊາຊົນບັນດາເຜົ່າລຽບຕາມ

ຊາບແດນໃຫ້ເຂົ້າໃຈຄຳສັ່ງ ຂອງເຈົ້າແຂວງ ສະບັບເລກທີ 05 / ຈຂກອປ ລົງວັນທີ 12 / 3 / 2020 ກ່ຽວກັບການປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ພະຍາດອັກເສບປອດຈາກເຊື້ອຈຸລະໂລກພັນໃໝ່ ( COVID - 19) ກໍຄືປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

3. ມອບໃຫ້ພະແນກສາທາລະນະສຸກແຂວງແຕ່ງຕັ້ງພະນັກງານແພດໝໍ ໄປປະຈຳດ່ານສາກົນພູເກືອ ເມືອງພູວົງ ແຂວງອັດຕະປື ໂດຍໃຫ້ປະຕິບັດຕາມມາດຕະການໃນການປ້ອງກັນ ແລະ ຄວບຄຸມຢ່າງເຂັ້ມງວດ, ເຜີຍແຜ່ຂໍ້ມູນຂ່າວສານທີ່ຖືກຕ້ອງໃນການປ້ອງກັນ ແລະ ຄວບຄຸມພະຍາດພະຍາດຢ່າງທົ່ວເຖິງ.

4. ມອບໃຫ້ພະແນກການຕ່າງປະເທດແຂວງ ສົມທົບແຈ້ງໃຫ້ພະແນກການຕ່າງປະເທດແຂວງກອນຕຸມ ສ ສ ຫວຽດນາມ, ແຂວງຊຽງແຕງ ແລະ ລັດຕະນະຄີລີ ຣາຊະອານາຈັກກຳປູເຈຍ ແລະ ແຈ້ງໃຫ້ກົງສຸນຂອງສອງປະເທດດັ່ງກ່າວ ທີ່ປະຈຳຢູ່ນະຄອນປາກເຊ ແຂວງຈຳປາສັກຮັບຮູ້ ແລະ ເຂົ້າໃຈເຖິງຈຸດປະສົງຂອງການປິດດ່ານທ້ອງຖິ່ນ ແລະ ດ່ານປະເພນີຊົ່ວຄາວໃນຄັ້ງນີ້.

5. ມອບໃຫ້ຄະນະຄຸ້ມຄອງດ່ານສາກົນພູເກືອ ນຳພາ-ຊີ້ນຳເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ທີ່ປະຈຳຢູ່ດ່ານສາກົນພູເກືອ ຈົ່ງໃຫ້ການຮ່ວມມື ແລະ ຊ່ວຍເຫຼືອກັບເຈົ້າໜ້າທີ່ພະນັກງານແພດໝໍທີ່ປະຕິບັດໜ້າທີ່ດ້ານວິຊາສະ ເພາະໃນຢູ່ຈຸດດັ່ງກ່າວໃຫ້ໄດ້ຮັບຜົນດີ.

- ໃຫ້ເຈົ້າໜ້າທີ່ ແລະ ພະນັກງານທີ່ຮັບຜິດຊອບກວດກາຄົນເຂົ້າ-ອອກເມືອງ, ພາຫະນະ, ສິນຄ້າ ແລະ ອື່ນໆ ເອົາໃຈໃສ່ປ້ອງກັນຕົວເອງໃຫ້ຖືກຕ້ອງຕາມຫຼັກວິຊາການແພດຢ່າງເຂັ້ມງວດ.

6. ມອບໃຫ້ບັນດາພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າຂັ້ນແຂວງ, ເຈົ້າເມືອງ 05 ຕົວເມືອງ ຈົ່ງໄດ້ສຶກສາອົບຮົມການເມືອງແນວຄິດໃຫ້ບັນດາພະນັກງານ, ພໍ່ແມ່ປະຊາຊົນ ໃຫ້ຮັບຮູ້, ເຂົ້າໃຈ ແລະ ເອົາໃຈໃສ່ໃນການປ້ອງກັນ ແລະ ຄວບຄຸມພະຍາດດັ່ງກ່າວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າຫ້ອງວ່າການແຂວງ

ແຂວງອັດຕະປື
ຫ້ອງວ່າການ

ທະນູໄຊ ບັນຊາລິດ

ບ່ອນນຳສົ່ງ:

- ເຈົ້າແຂວງ, ຮອງເຈົ້າແຂວງລະ 1 ສະບັບ.
- ຄະນະຫ້ອງວ່າການແຂວງລະ 1 ສະບັບ.
- ຂະແໜງເກັບເອົາ-ສັງລວມ, ຫວຂ 1 ສະບັບ.
- ຂະແໜງຈັດຕັ້ງ-ກວດກາ, ຫວຂ 1 ສະບັບ.
- ເກັບມ້ຽນ 1 ສະບັບ